ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 80 /ສພຂ

ໄຊຍະບູລີ, ວັນທີ 5....ທັນວາ 2025

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງເອົາ ປະທານອົງການກວດກາລັດແຂວງ, ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ແຂວງໄຊຍະບູລີ

- ອີງຕາມ ໝວດທີ VIII, ມາດຕາ 78 ຂອງລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2025).
- ອີງຕາມ ມາດຕາ 53 ຂໍ້ 7 ວັກທ້າຍໃນມາດຕານີ້ ແລະ ມາດຕາ 56 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ເລກທີ 57/ສພຊ, ລົງວັນທີ 28 ມິຖຸນາ 2025.
- ອີງຕາມ ການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ຜ່ານການຄົ້ນຄວ້າ ພິຈາລະນາ ປະກອບຄຳເຫັນຢ່າງຖີ່ຖ້ວນ ຂອງບັນດາສະມາຊິກສະພາປະຊາຊົນແຂວງ ໃນວາລະກອງປະຊຸມສະໄໝວິສາມັນ ເທື່ອທີ 2 ຂອງສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ IV ຄັ້ງວັນທີ 5 ທັນວາ 2025.

## ກອງປະຊຸມ ຕົກລົງ:

**ມາດຕາ 1** ຮັບຮອງເອົາການສະເໜີແຕ່ງຕັ້ງ ທ່ານ **ຄຳເຫຼັກ ເພົາວິໄລພອນ** ເປັນປະທານອົງການກວດກາລັດ, ຫົວໜ້າຕ້ານການສໍ້ລາດບັງຫຼວງແຂວງໄຊຍະບູລີ.

**ມາດຕາ 2** ບັນດາອົງການຈັດຕັ້ງພັກ-ລັດ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ ແລະ ຜູ້ກ່ຽວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ມາດຕາ 3** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງມີລັນ ຄຳພັນເພັງ

CS ສແກນດ້ວຍ CamScanner

สแกนด้วย CamScanner